# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 1 ມິຖຸນາ 2008 (6-01-2008)

## <u>ປີທີ່ນໍາໄປສູ່ຄວາມສໍາເຣັດອັນແທ້ຈິງ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ສຸພາສິດ 1:1-7; 2:4-8; 3:5-6, 11-12

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພຣະຜູ້ເປັນເຈົ້າຢາກໃຫ້ຄົນທັງຫລາຍມີຄວາມສໍາເຣັດໃນການດໍາເນີນຊີວິດອັນຖືກຕ້ອງ ແລະພຣະອົງຊົງບອກສອນຄົນທີ່ຮູ້ຈັກແລະວາງໃຈເຊື່ອໃນພຣະອົງໃນທາງທີ່ເຂົາເຈົ້າສາມາດເຮັດໄດ້.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານສະແດງອອກເຖິງສະຕິປັນຍາທີ່ມາຈາກພຣະເຈົ້າ ໃນການດໍາລົງຊີວິດແຕ່ລະວັນຂອງທ່ານໂດຍ...

- ເຫັນດີວ່າພຣະເຈົ້າຕ້ອງການໃຫ້ທ່ານມີຄວາມສໍາເຣັດໃນການດໍາລົງຊີວິດອັນຖືກຕ້ອງ ແລະ...
- ຮັບເອົາການນໍາພາອັນສລາດຈາກຂໍ້ພຣະຄັມພີໃນການດໍາລົງຊີວິດທີ່ປະສົບຄວາມສໍາເຣັດ

## <u>ຂ້າພະເຈົ້າຈະປະສົບຄວາມສໍາເຣັດຢ່າງແທ້ຈິງໃນຊີວິດຢ່າງໃດ?</u>

ການສລອງການຈົບການສຶກສາເປັນພິທີທີ່ພວກເຮົາຄຸ້ນເຄີຍດີໃນວັທນະທັມຂອງພວກເຮົາ. ຄໍາແນະນໍາສ່ວນຫລາຍແມ່ນໃຫ້ແນໃສ່ຄວາມສໍາເຣັດ ແລະພະຍາຍາມບອກກຸນແຈນໍາໄປສູ່ຄວາມສໍາເຣັດໃຫ້ແກ່ຜູ້ທີ່ຮຽນຈົບ. ສ່ວນຫລາຍຜູ້ທີ່ກ່າວຄໍາປາສັຍຈະຫນູນໃຈຜູ້ທີ່ຮຽນຈົບໃຫ້ຕັດສິນໃຈອັນແນ່ວແນ່ມຸ້ງຫນ້າໄປສູ່ສິ່ງທີ່ຍິ່ງໃຫຍ່ໃນອະນາຄົດ.

ພວກເຮົາຈະຊອກຫາຄວາມຫມາຍຂອງຄໍາວ່າ "ຄວາມສໍາເຣັດ" ແລະ "ທາງໄປສູ່ຄວາມສໍາເຣັດ" ນັ້ນຢ່າງໃດ? ປຶ້ມພຣະທັມສຸພາສິດໄດ້ຊີ້ບອກຢ່າງແຈ່ມແຈ້ງແລະເຫັນພາບຂອງຄວາມສໍາເຣັດ ແລະຊີ້ບອກທາງໄປສູ່ຄວາມສໍາເຣັດນັ້ນຢ່າງແທ້ຈິງ.

## <u>ສຶກສາພຣະຄັມພີ</u>

**1. <u>ຮຽນຮູ້ຈາກຂໍ້ພຣະຄັມພີ</u>** (ສຸພາສິດ 1:1-6)

ກະສັດໂຊໂລໂມນ ເປັນຜູ້ທີ່ມີຊື່ສຽງໃນເຣື່ອງສະຕິປັນຍາ ( 2 ຂ່າວຄາວ 9:5-7, 22-23) ບຸດຂອງກະສັດດາວິດ ກະສັດອິສຣາເອັນຄົນນີ້ມີຄວາມຮ້ອນຮົນໃຈສແວງຫາສະຕິປັນຍາ ( 2 ຂ່າວຄາວ 1:1-13) ພຣະອົງເປັນຜູ້ຂຽນແລະຮວບຮວມພຣະທັມສຸພາສິດ. ພວກເຮົາເຂົ້າມາໃນໂລກນີ້ຢ່າງໄຮ້ດຽງສາແລະບໍ່ມີປະສົບການໃດໆ. ພວກເຮົາບໍ່ເຂົ້າໃຈແຈ້ງຫລືບໍ່ມີຄວາມສລາດແລະພວກເຮົາຕ້ອງການໆ ບອກສອນ. ເຫມືອນກັບເດັກນ້ອຍທີ່ບໍ່ຮູ້ຈັກວ່າໄຟນັ້ນຮ້ອນແລະມີດນັ້ນຄົມ ພວກເຮົາບໍ່ໄດ້ສັມຜັດກັບອັນຕະລາຍຂອງຊີວິດຢ່າງແທ້ຈິງ. ແມ່ນແລ້ວ, ຄົນທີ່ສລາດໄດ້ຮຽນຮູ້ຈາກປະສົບການຂອງຄົນອື່ນ. ການມີສະຕິປັນຍາແມ່ນສິ່ງທີ່ພວກເຮົາຕ້ອງການ ແລະພວກເຮົາກໍສາມາດພົບໄດ້ຈາກປຶ້ມພຣະຄັມພີ.

ແນ່ນອນ, ທຸກຄົນຢາກມີຄວາມສໍາເຣັດໃນຊີວິດ, ເພື່ອຈະໄດ້ຊົມຊື່ນຍິນດີກັບສຸຂພາບອັນສົມບູນ, ມີຄວາມສັມພັນອັນດີ, ແລະວຽກງານອັນມີຄວາມຫມາຍ. ການດໍາລົງຊີວິດທີ່ປະສົບຜົນສໍາເຣັດນັ້ນແມ່ນການດໍາເນີນຊີວິດທີ່ຢູ່ໃນຄວາມຊອບທັມ. ນອກຈາກການຮັບເອົາການບອກສອນອັນຊອບທັມ, ຍຸດຕິທັມແລະຖືກຕ້ອງແລ້ວ ໃຫ້ພວກເຮົາມອບຄວາມສໍາເຣັດໄວ້ກັບພຣະເຈົ້າແລະສແວງຫາຄວາມສໍາເຣັດຕາມທີ່ພຣະອົງຊົງກໍານົດໄວ້ໃຫ້.

ກະສັດໂຊໂລໂມນໄດ້ສນັບສນູນສະຕິປັນຍາ(ຄວາມສລາດ). ການມີສະຕິປັນຍາບໍ່ແມ່ນຄວາມຊົ່ວຮ້າຍ, ແມ່ນແຕ່ອົງພຣະເຢຊູກໍຊົງສນັບສນູນໃຫ້ຕໍ່ສູ້ກັບຄວາມຊົ່ວຮ້າຍດ້ວຍສະຕິປັນຍາ(ຄວາມສລາດ)ໂດຍທີ່ບໍ່ຕ້ອງເຂົ້າໄປພົວພັນກັບມັນ ( ມັດທາຍ 10:16 )

**ສະຕິປັນຍາ**

ສ່ວນຫລາຍຄົນໃນສມັຍນີ້ຈະເອົາສະຕິປັນຍາມາກ່ຽວພັນກັບຄວາມຮູ້. ເຂົາເຈົ້າເຫັນຄວາມຮູ້ເປັນເຫມືອນຄວາມຈິງ, ແລະສະຕິປັນຍາແມ່ນການນຳເອົາຄວາມຈິງມາໃຊ້. ແຕ່ຕາມຄວາມຄິດທາງພຣະຄັມພີເຫັນວ່າສະຕິປັນຍານັ້ນສົມບູນກວ່າ ເພາະວ່າມັນໄດ້ກ່ຽວພັນກັບຜູ້ທີ່ມີຄວາມສັມພັນກັບພຣະເຈົ້າ. ສະຕິປັນຍາແມ່ນການຮູ້ຈັກກັບພຣະເຈົ້າ, ໂຄຣົບພຣະອົງແລະປະພຶດຕາມການຊົງນຳຂອງພຣະອົງ ຊຶ່ງສາມາດພົບໄດ້ຢູ່ໃນພຣະຄັມພີ. ອີງຕາມພຣະຄັມພີ, ທຸກຄົນສາມາດໄດ້ຮັບສະຕິປັນຍາ ແຕ່ຈະຕ້ອງອຸທິດຕົນຢ່າງສູງສົ່ງຄືເຮົາຕ້ອງສແວງຫາພຣະເຈົ້າແລະໂຄຣົບນັບຖືພຣະອົງຢ່າງແທ້ຈິງ.

**ໝາຍເຫດ:** ເພາະວ່າໃນພາສາອັງກິດ wisdom ແລະ wise ມາຈາກຮາກຄຳສັບດຽວກັນ ດັ່ງນັ້ນຂ້າພະເຈົ້າຜູ້ຮຽບຮຽງບົດຮຽນນີ້ ຈຶ່ງແປເປັນພາສາລາວວ່າ "<u>ສະຕິປັນຍາ</u>" ແລະບາງຄັ້ງກໍແປວ່າ "<u>ສລາດ</u>"

ມີຫລາຍສິ່ງໃນຊີວິດທີ່ຕ້ອງຕັດສິນໃຈເລືອກ. ຜູ້ຂາດປະສົບການຈະຮູ້ໄດ້ຢ່າງໃດວ່າຈະຕັດສິນໃຈເລືອກເອົາອັນໃດ? ຄຸນທັມອັນດີຮອບຄອບມີຄຸນຄ່າຫລາຍຕໍ່ຄົນໜຸ່ມທີ່ກຳລັງຮຽນເພື່ອຈະຮູ້ເຣື່ອງຄວາມສລາດແລະແຜນການເພື່ອຄວາມສຳເຣັດທີ່ຂຶ້ນຢູ່ກັບຄວາມຮູ້ດ້ານພຣະຄັມພີ. ແຕ່ຢ່າງໃດກໍຕາມ, ຄວາມຮູ້ທີ່ຕົນມີຢູ່ແລ້ວນັ້ນແຫລະທີ່ເປັນອຸປສັກຂັດຂວາງອັນຍິ່ງໃຫຽ່ຕໍ່ການຮຽນ. ເມື່ອເຫັນວ່າຕົນເອງມີຄວາມຮູ້ແລ້ວກໍບໍ່ຢາກຮ່ຳຮຽນສຶກສາເພີ້ມເຕີມອີກ. ດັ່ງນັ້ນຄົນທີ່ສລາດແມ່ນຜູ້ທີ່ມີຄວາມເຕັມໃຈທີ່ຈະຮັບເອົາການບອກສອນແລະຮັບເອົາການຊີ້ນຳເພີ້ມເຕີມອີກ.

ອົງການທີ່ຂ້າພະເຈົ້າເຮັດງານນຳ ໄດ້ຕັ້ງວັນພັທນາຄົນງານໄວ້ເພື່ອປັບປຸງພັທນາຄວາມຊຳນານຂອງຄົນງານ. ຕົວຢ່າງນຶ່ງນັ້ນແມ່ນຫ້ອງອົບຮົມເພື່ອໃຫ້ຄົນງານມີຄວາມຊຳນານໃນວຽກງານ. ໃນຊ່ວງເວລາການອົບຮົມນັ້ນຂ້າພະເຈົ້າໄດ້ຍິນຄົນງານຜູ້ນຶ່ງເວົ້າວ່າ "*ເທື່ອນີ້ແມ່ນຄັ້ງທີສາມແລ້ວທີ່ຂ້ອຍຮັບການອົບຮົມວິຊານີ້ ເຮັດໃຫ້ຂ້ອຍເສັຽເວລາໄປລ້າໆ*" ດັ່ງນັ້ນຄົນງານຜູ້ນີ້ຈຶ່ງຕໍ່ຕ້ານກັບຄົນງານອື່ນໆ ແລະຕໍ່ມາກໍມີຄວາມລຳບາກໃນການເຮັດວຽກງານຂອງລາວເພາະວ່າລາວຂາດຄວາມຊຳນານ ເຖິງແມ່ນວ່າລາວມີຄວາມຮູ້ໃນເຣື່ອງຫລັກວິຊາການແລ້ວກໍຕາມ. ຖ້າຫາກຄົນຜູ້ນີ້ເປັນຄົນສລາດທີ່ແທ້ຈິງ ລາວຈະຕ້ອງຮັບເອົາໂອກາດອັນດີເພື່ອຈະຮຽນຮູ້ແລະຈະເຣີນເຕີບໃຫຽ່ຂຶ້ນ. ແຕ່ຄວາມໂງ່, ຄວາມອວດຕົວ, ຄວາມຈອງຫອງ ໄດ້ຂັດຂວາງຄວາມສຳເຣັດໃນວຽກງານຂອງລາວ.

ພຣະເຈົ້າຊົງຮູ້ດີວ່າການເປັນຢູ່ຂອງມະນຸດຫລາຍຄັ້ງກໍມີຄວາມສັບສົນ. ການສແວງຫານ້ຳພຣະທັຍພຣະເຈົ້າໃນຊີວິດຈະເຮັດໃຫ້ມີຄວາມສລາດເພື່ອຫັນປ່ຽນໄປສູ່ທາງແຫ່ງຄວາມສຳເຣັດໃນຊີວິດ.

## ໒. <u>ໂຄຣົບພຣະຜູ້ເປັນເຈົ້າ</u> (ສຸພາສິດ 1:7; ໒:4-8)

ຄົນຜູ້ນຶ່ງຈະມີສອງແງ່ມຸມໃນດ້ານຄວາມຄິດ ຄວາມຄິດນຶ່ງລາວເຫັນວ່າຕົນເອງເທົ່າທຽມກັບພຣະເຈົ້າ ຫລືຫມິ່ນປມາດພຣະອົງເພາະເຫັນວ່າຕົນເອງມີຄວາມຮູ້ສູງ, ແລະອີກຄວາມຄິດນຶ່ງລາວອາດຈະເບິ່ງພຣະເຈົ້າດ້ວຍຄວາມຢຳເກງ, ໂຄຣົບນັບຖື. ຈາກຕອນທ້າຍປໂຍກຂອງຖ້ອຍຄຳນີ້ເຮົາສາມາດເວົ້າໄດ້ວ່ານັ້ນແມ່ນຢຳເກງພຣະເຈົ້າ. ຄວາມຢຳເກງເປັນຈຸດເລີ້ມຕົ້ນໃຫ້ເກີດມີສະຕິປັນຍາ.

ຄົນທີ່ສແວງຫາສະຕິປັນຍາດ້ວຍຄວາມຈິງໃຈເທົ່ານັ້ນຈຶ່ງຈະໄດ້ຮັບສະຕິປັນຍາ. ໃນພຣະທັມສຸພາສິດ ໒:4 ໄດ້ກ່າວເຖິງສະຕິປັນຍາ. ພວກເຮົາຄວນຈະສແວງຫາພຣະເຈົ້າແລະສະຕິປັນຍາທີ່ມາຈາກພຣະອົງ ເຫມືອນກັບເຮົາຊອກຫາເງິນແລະຊຸມຊັບ. ຄວາມແຕກຕ່າງຣະຫວ່າງສະຕິປັນຍາແລະຊຸມຊັບນັ້ນແມ່ນ ຊຸມຊັບເປັນສິ່ງທີ່ຊຸກເຊື່ອງດ້ວຍການຝັງໄວ້ ແຕ່ພຣະເຈົ້າບໍ່ໄດ້ຊຸກເຊື່ອງຄຳສອນຂອງພຣະອົງ. ສະຕິປັນຍາມີໄວ້ສຳລັບທຸກໆ ຄົນທີ່ມີໃຈປາຖນາ

ຢາກຮັບເອົາ. ຖ້າຢາກມີສະຕິປັນຍາເຮົາຕ້ອງຢຳເກງພຣະເຈົ້າ, ສະຕິປັນຍາແມ່ນຄວາມຮູ້ເຣື່ອງພຣະເຈົ້າ. ຄວາມສັມພັນຂອງເຮົາກັບພຣະເຈົ້າມີຢູ່ສອງປະການຄື ຄວາມໂຄຣົບນັບຖືອັນເລິກເຊິ່ງແລະຄວາມໃກ້ຊິດທາງສ່ວນຕົວກັບພຣະອົງ.

ພຣະຜູ້ເປັນເຈົ້າເປັນແຫລ່ງທີ່ມາຂອງສະຕິປັນຍາ ແຕ່ພຣະອົງຈະປະທານໃຫ້ພວກເຮົາແນວໃດ? ພຣະອົງຊົງປະທານໃຫ້ພວກເຮົາຜ່ານທາງພຣະໂອດ(ປາກ)ຫລືທາງພຣະຄຳ, ພຣະຄັມພີ, ຊຶ່ງພວກເຮົາຕ້ອງເຂົ້າໃຈແລະຮູ້ເຖິງພຣະປະສົງຂອງພຣະອົງໃນຊີວິດຂອງພວກເຮົາ ລວມທັງຄວາມສຳເຣັດໃນພຣະປະສົງນັ້ນ. ຄວາມສຳເຣັດໄດ້ລໍຖ້າຜູ້ທີ່ດຳເນີນຊີວິດດ້ວຍສະຕິປັນຍາ ເພາະວ່າສິ່ງເຫລົ່ານີ້ພຣະເຈົ້າຊົງຕຽມໄວ້ໃຫ້ຜູ້ທີ່ມີຄວາມຊອບທັມ.

ບັນດາຜູ້ທີ່ດຳເນີນຊີວິດດ້ວຍສະຕິປັນຍາສາມາດຮູ້ໄດ້ວ່າເສັ້ນທາງ ແລະການເດີນທາງຂອງລາວຈະໄດ້ຮັບການປົກປ້ອງຄຸ້ມຄອງຈາກພຣະເຈົ້າ. ຄວາມປອດພັຍນີ້ໄດ້ມາຍ້ອນລາວດຳເນີນຊີວິດດ້ວຍສະຕິປັນຍາຊຶ່ງເປັນຄວາມປອດພັຍອັນສູງສຸດໃນຊີວິດ. ໄພ່ພົນຜູ້ມີຄວາມຈິງຮັກພັກດີຕໍ່ພຣະເຈົ້າຈະໄດ້ຮັບການປົກປ້ອງຄຸ້ມຄອງຈາກພຣະອົງເພາະວ່າເຂົາເຈົ້າຢຳເກງພຣະອົງແລະສແວງຫາຄຳປຶກສາແຫ່ງສະຕິປັນຍາທີ່ມາຈາກພຣະອົງ.

### 3. <u>ດຳລົງຊີວິດດ້ວຍຄວາມເຊື່ອ</u> (ສຸພາສິດ 3:5-6)

ພວກເຮົາສາມາດວາງແຜນໃຫ້ເກີດຄວາມສຳເຣັດແລະຫາໂອກາດໃນການສຶກສາຫາຄວາມຮູ້ເພີ້ມເຕີມ ແລະພັທນາຄວາມຊຳນານຂອງເຮົາໄດ້. ແຕ່ວ່າຍັງມີຫລາຍສິ່ງຫລາຍຢ່າງທີ່ເກີນຄວາມຮູ້ແລະຄວາມສາມາດຂອງເຮົາໃນການທີ່ຈະເຮັດໃຫ້ເຮົາມີຄວາມສຳເຣັດໃນຊີວິດ. ເຮົາບໍ່ສາມາດເພິ່ງໃນຄວາມຮອບຮູ້ຂອງເຮົາເອງໄດ້. ດັ່ງນັ້ນຈຶ່ງຈຳເປັນທີ່ພວກເຮົາຕ້ອງວາງໃຈໃນພຣະເຈົ້າ ແລະການຊົງນຳຂອງພຣະອົງໃນຊີວິດຂອງເຮົາຕາມທາງຂອງພຣະອົງ. ແລະເຮົາຕ້ອງມີຄວາມເຊື່ອໃນພຣະອົງດ້ວຍສຸດຈິດສຸດໃຈຂອງເຮົາ.

ການດຳເນີນຊີວິດດ້ວຍຄວາມເຊື່ອແລະການວາງໃຈເຊື່ອໃນການຊົງນຳພາຂອງພຣະເຈົ້າ ເຮົາຕ້ອງເຊື່ອໃນພຣະອົງຢ່າງຮອບດ້ານບໍ່ແມ່ນແຕ່ເວລາມີການຕັດສິນໃຈຫລືມີບັນຫາໃຫຽ່ເທົ່ານັ້ນ. ລະນຶກເຖິງພຣະປະສົງຂອງພຣະເຈົ້າທີ່ມີຕໍ່ຊີວິດຂອງທ່ານໃນແຕ່ລະວັນ ພຣະອົງຈະຊົງນຳພາທ່ານເດີນໄປໃນທາງທີ່ຖືກຕ້ອງ. ຜົນສະທ້ອນຕໍ່ຊີວິດແລະຄວາມສຳເຣັດ ສ່ວນຫລາຍເຮົາຈະເຫັນເປັນແຕ່ພຽງເຫດການນ້ອຍໆ ແຕ່ເມື່ອເຫດການນັ້ນໄດ້ເກີດຂຶ້ນແລະຜ່ານພົ້ນໄປແລ້ວ ເຮົາຈຶ່ງເຫັນຄວາມຍິ່ງໃຫຽ່ຂອງມັນ. ຄວາມສຳເຣັດໃນຊີວິດສ່ວນຫລາຍຈະເກີດຂຶ້ນໃນແຕ່ລະວັນ ຈາກການເລືອກດ້ວຍຄວາມຫມັ້ນໃຈຂອງເຮົາ ທີ່ຈະດຳເນີນຊີວິດດ້ວຍສະຕິປັນຍາທີ່ມາຈາກພຣະເຈົ້າ.

### 4. <u>ຍ້ອງຍໍການບອກສອນຂອງພຣະເຈົ້າ</u> (ສຸພາສິດ 3:11-12)

ພໍ່ທີ່ດີຈະເຮັດທຸກສິ່ງຕາມຄວາມສາມາດເພື່ອກະກຽມໃຫ້ລູກຂອງຕົນປະສົບຄວາມສຳເຣັດ. ປື້ມພຣະທັມສຸພາສິດປະກອບດ້ວຍຄຳປຶກສາອັນສລາດຂອງພໍ່ທີ່ມີຕໍ່ລູກ. ຖ້ອຍຄຳທີ່ວ່າ "**ລູກເອີຍ**" ຫລື "**ພວກລູກໆເອີຍ**" ໄດ້ປາກົດ 27 ເທື່ອໃນພຣະທັມສຸພາສິດ. ພຣະທັມສຸພາສິດປະກອບດ້ວຍຄຳປຶກສາຂອງພຣະເຈົ້າສຳລັບໄພ່ພົນຂອງພຣະອົງໂດຍຜ່ານການຊົງສ້າງພ້ອມທັງການຊົ່ງໄຖ່ຂອງພຣະອົງ.

ແຕ່ຢ່າງໃດກໍຕາມ, ມີບາງຄົນໄດ້ດູຫມິ່ນການບອກສອນຂອງພຣະເຈົ້າ. ການດູຫມິ່ນແມ່ນການບໍ່ຖືວ່າຄຳສອນນັ້ນມີຄຸນຄ່າມີຄວາມສຳຄັນ, ເມີນເສີຍບໍ່ເອົາໃຈໃສ່ ແລະຕໍ່ຕ້ານ. ແມ່ນຫຽັງເຮັດໃຫ້ທ່ານເບື່ອຫນ່າຍຕໍ່ການບອກສອນແລະບໍ່ນັບຖືຄຳປຶກສາທີ່ພຣະເຈົ້າຊົງບອກສອນທ່ານ? ພວກເຮົາສາມາດຊອກຫາຄຳຕອບໄດ້ຈາກຂໍ້ທີ 12 ທີ່ກ່າວວ່າ "<u>ເພາະວ່າ.</u>" ພຣະເຈົ້າຊົງບອກສອນແລະຕີສອນເຮົາ<u>ເພາະວ່າ</u>ພຣະອົງຊົງຮັກພວກເຮົາແລະໃຫ້ເຮົາໄດ້ຮັບສິ່ງດີທີ່ສຸດໃນຊີວິດຂອງເຮົາ. ພຣະອົງຢາກໃຫ້ພວກເຮົາປະສົບກັບຄວາມສຳເຣັດ ແລະຊົງປະທານພຣະຄຳຂອງພຣະອົງໃຫ້ແກ່ເຮົາ ເພື່ອໃຫ້ພວກເຮົາດຳລົງຊີວິດຢ່າງມີສະຕິປັນຍາແລະພົບກັບຄວາມສຳເຣັດນັ້ນ.

ພໍ່ທີ່ມີຄວາມຮັກຈະບອກສອນບັນດາລູກໆ ຂອງລາວ ເພາະວ່າລາວມີຄວາມຊົມຊື່ນຍິນດີໃນພວກເຂົາ. ລາວກະທຳເຊັ່ນນັ້ນກໍເພື່ອນຳຄວາມປອດພັຍແລະຄວາມເພິ່ງພໍໃຈໃນອະນາຄົດແກ່ພວກເຂົາ. ບັນລູກໆ ທີ່ເຂົ້າໃຈເຖິງ

ຄວາມຮັກຄວາມເປັນຫ່ວງຂອງພໍ່ ກໍມີເຫດຜົນຢ່າງຫລວງຫລາຍທີ່ຈະຮັບເອົາການບອກສອນຂອງພໍ່ ເພາະພວກເຂົາມີຄວາມຫມັ້ນໃຈໃນຄວາມຮັກຂອງຜູ້ເປັນພໍ່. ໃນກໍຣະນີດຽວກັນ, ພວກເຮົາຄວນຍອມຮັບເອົາການຊົງນຳຈາກພຣະຄຳຂອງພຣະເຈົ້າ ເພາະພວກເຮົາມີຄວາມຫມັ້ນໃຈວ່າພຣະອົງຊົງຮັກພວກເຮົາແລະຢາກໃຫ້ພວກເຮົາໄດ້ຮັບສິ່ງທີ່ດີທີ່ສຸດໃນຊີວິດ.

## ບົດຮຽນຊີວິດ

ພຣະເຈົ້າມີພຣະປະສົງຢາກໃຫ້ໄພ່ພົນຂອງພຣະອົງປະສົບກັບຄວາມສຳເຣັດ ແລະພຣະອົງໄດ້ຊົງກຳນົດໄວ້ໃຫ້ພວກເຂົາ. ຄວາມສຳເຣັດແມ່ນການມີສະຕິປັນຍາໃນການດຳເນີນຊີວິດຊຶ່ງເລີ້ມຕົ້ນດ້ວຍການໂຄຣົບຢຳເກງພຣະອົງ. ບັນດາຜູ້ທີ່ສແວງຫາຄວາມສຳເຣັດຕາມທາງຂອງພຣະເຈົ້າໂດຍຄວາມເຊື່ອແລະສແວງຫາພຣະປະສົງຂອງພຣະເຈົ້າໃນຊີວິດຂອງພວກເຂົາ, ພຣະຄັມພີກໍພ້ອມແລ້ວທີ່ຈະໃຫ້ເຂົາມີສະຕິປັນຍາຈາກການສແວງຫານັ້ນ.

ທ່ານຈະສະແດງອອກໃຫ້ເຫັນເຖິງສະຕິປັນຍາທີ່ມາຈາກພຣະເຈົ້າຢ່າງໃດໃນການດຳລົງຊີວິດປະຈຳວັນຂອງທ່ານ?

- ຈົ່ງແນ່ໃຈວ່າທ່ານໄດ້ສແວງຫາສະຕິປັນຍາໃຫ້ຖືກບ່ອນ. ຫລາຍຄົນທີ່ຖືກເອີ້ນວ່າ "ຜູ້ຊ່ຽວຊານ" ໄດ້ໃຫ້ຄຳແນະນຳແກ່ພວກເຮົາ ແຕ່ສະຕິປັນຍາອັນແທ້ຈິງນັ້ນແມ່ນຄຳແນະນຳທີ່ມາຈາກພຣະຄຳຂອງພຣະເຈົ້າ.
- ຈົ່ງຍອມຮັບວ່າຄວາມເຂົ້າໃຈຂອງເຮົາມີຂອບເຂດຈຳກັດ ເຮົາສາມາດຳລົງຊີວິດດ້ວຍຄວາມສຳເຣັດຢ່າງຖືກຕ້ອງດ້ວຍການວາງໃຈເຊື່ອໃນພຣະເຈົ້າ ເພິ່ງພາພຣະອົງໃນທຸກສິ່ງທີ່ເຮົາກະທຳ.
- ຍອມເຊື່ອຟັງຄຳສັ່ງຂອງພຣະເຈົ້າ ນັ້ນແມ່ນເຄື່ອງຫມາຍທີ່ສະແດງວ່າເຮົາວາງໃຈໃນສະຕິປັນຍາທີ່ມາຈາກພຣະອົງ ໃນຄວາມຮັກຂອງພຣະອົງ ບໍ່ວ່າຈະເປັນດ້ານຄວາມສັມພັນ, ດ້ານການເງິນ ຫລືການງານ ພຣະເຈົ້າມີແຜນການອັນດີຕໍ່ຊີວິດຂອງທ່ານ. ການຍອມເຊື່ອຟັງພິສູດໃຫ້ເຫັນວ່າທ່ານວາງໃຈໃນພຣະອົງຢ່າງແທ້ຈິງ.
- ສຳຣວດເບິ່ງທາງຊີວິດຂອງທ່ານທີ່ທ່ານກຳລັງເດີນຢູ່ໃນເວລານີ້. ບາງເທື່ອພຣະເຈົ້າອາດຈະໃຊ້ສະຖານະການໃນຊີວິດຂອງທ່ານເພື່ອບອກສອນທ່ານ ເພື່ອໃຫ້ທ່ານປັບປຸງແກ້ໄຂການດຳເນີນຊີວິດໂດຍມີສະຕິປັນຍາ.

ສະຕິປັນຍາຈາກພຣະເຈົ້າມີໄວ້ສຳລັບພວກເຮົາ ຖ້າພວກເຮົາຍອມຮັບວ່າພວກເຮົາມີຄວາມຮູ້ພຽງແຕ່ຍິບມືດຽວ ແລະພວກເຮົາຢາກມີສະຕິປັນຍາຫລາຍຊ່ຳໃດ. ບໍ່ພຽງແຕ່ເທົ່ານັ້ນ, ພຣະເຈົ້າຈະຊົງນຳພວກເຮົາໄປໃນທາງທີ່ຖືກຕ້ອງ ແລະບອກສອນເຮົາເມື່ອເຮົາອວ່າຍອອກຈາກທາງແຫ່ງສະຕິປັນຍາ ຊົງນຳພາເຮົາໄປສູ່ຄວາມສຳເຣັດອັນແທ້ຈິງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by PS